ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 139 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສັງຄົມສົງເຄາະ

- ອີງຕາມ ມາດຕາ 68 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 158/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 36/ຄປຈ, ລົງວັນທີ 23 ກໍລະກົດ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສັງຄົມສົງເຄາະ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 158 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 25

## ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັງຄົມສົງເຄາະ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77 /ສພຊ, ລົງວັນທີ 20 ເດືອນມີນາ ປີ 2025 ມາດຕາ 54 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 56 /ສພຊ, ລົງວັນທີ 28 ມິຖຸນາ 2024 ມາດຕາ 11 ຂໍ້ 1.

ພາຍຫຼັງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສັງຄົມສົງເຄາະ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 17 ມິຖຸນາ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 25 ມິຖຸນາ 2025.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສັງຄົມສົງເຄາະ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກ ສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 82 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2025

# ກົດໝາຍ
# ວ່າດ້ວຍສັງຄົມສົງເຄາະ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານສັງຄົມສົງເຄາະ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ເປົ້າໝາຍສັງຄົມສົງເຄາະ ໄດ້ຮັບການຊ່ວຍເຫຼືອ ແລະ ການບໍລິການ ເພື່ອແກ້ໄຂຊີວິດການເປັນຢູ່ທາງດ້ານ ວັດຖຸ, ຈິດໃຈ, ປົກປ້ອງເປົ້າໝາຍສັງຄົມສົງເຄາະ ແລະ ສ້າງເງື່ອນໄຂການດຳລົງຊີວິດຂັ້ນພື້ນຖານ ໃຫ້ທົ່ວເຖິງ, ເປັນທຳ, ສ້າງສັງຄົມສາມັກຄີປອງດອງ, ຍຸຕິທຳ ແລະ ສີວິໄລ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ສັງຄົມສົງເຄາະ**

ສັງຄົມສົງເຄາະ ແມ່ນ ການໃຫ້ ການຊ່ວຍເຫຼືອ, ການບໍລິການ ທາງດ້ານ ວັດຖຸ, ຈິດໃຈ ແລະ ການພັດທະນາ ເປົ້າໝາຍສັງຄົມສົງເຄາະ ເປັນຕົ້ນ ດ້ານ ການອຸປະໂພກ, ການບໍລິໂພກ, ທີ່ຢູ່ອາໄສ, ການແພດ, ກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ ໃຫ້ສາມາດດຳລົງຊີວິດຂັ້ນພື້ນຖານ ແລະ ມີຊີວິດການເປັນຢູ່ດີຂຶ້ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເດັກທີ່ຕ້ອງປົກປ້ອງພິເສດ** ໝາຍເຖິງ ເດັກກຳພ້າ, ເດັກກຳພອຍ, ເດັກຖືກປະລະ, ເດັກຖືກປະຖິ້ມ, ເດັກພິການ, ເດັກຖືກທຳຮ້າຍຮ່າງກາຍ ແລະ ຈິດໃຈ, ເດັກຖືກຂູດຮີດທາງເພດ, ເດັກດ້ອຍໂອກາດ, ເດັກຖືກເຄາະຮ້າຍ, ເດັກກະທຳຜິດ, ເດັກທີ່ເປັນພະຍານ, ເດັກເຮັດວຽກຢູ່ໃນສະພາບແວດລ້ອມ ທີ່ເປັນອັນຕະລາຍ

ຮ້າຍແຮງຕໍ່ຊີວິດ, ສຸຂະພາບ ຫຼື ຖືກຂູດຮີດແຮງງານ, ເດັກອົບພະຍົບ, ເດັກຕິດຢາເສບຕິດ, ເດັກຕິດພະຍາດຕິດຕໍ່ຮ້າຍແຮງ ແລະ ເດັກທີ່ເປັນຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ;

2. **ໄພພິບັດ** ໝາຍເຖິງ ເຫດການທີ່ເປັນອັນຕະລາຍຮ້າຍແຮງທີ່ເກີດຂຶ້ນຈາກທຳມະຊາດ ແລະ/ຫຼື ມະນຸດສ້າງຂຶ້ນ ຊຶ່ງສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ, ເສດຖະກິດ ແລະ ການດຳລົງຊີວິດຂອງຄົນໃນສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ;

3. **ວັດຖຸທີ່ໃຊ້ໃນສັງຄົມສົງເຄາະ** ໝາຍເຖິງ ສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ວັກຊີນກັນພະຍາດ, ຢາ ແລະ ຜະລິດຕະພັນການແພດ, ສິ່ງປຸກສ້າງທີ່ຢູ່ອາໄສເບື້ອງຕົ້ນ, ເຄື່ອງມືປະກອບອາຊີບ ແລະ ສະໜອງປັດໄຈການຜະລິດ;

4. **ເຂົ້າເຖິງການບໍລິການຂັ້ນພື້ນຖານ** ໝາຍເຖິງ ການໄດ້ຮັບການບໍລິການສັງຄົມ ຊຶ່ງລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເປັນຜູ້ສະໜອງ ເປັນຕົ້ນ ດ້ານ ການແພດ, ກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ, ຂໍ້ມູນ ຂ່າວສານ ກ່ຽວກັບສັງຄົມສົງເຄາະ.

## ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສັງຄົມສົງເຄາະ

ລັດ ຖືສຳຄັນວຽກງານສັງຄົມສົງເຄາະ ດ້ວຍການກຳນົດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ສ້າງ ແລະ ພັດທະນາບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ກໍ່ສ້າງໂຄງລ່າງພື້ນຖານ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານສັງຄົມສົງເຄາະ ໃຫ້ມີຄວາມເຂັ້ມແຂງ, ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ ແລະ ປະກອບສ່ວນ ທຶນ, ເຕັກນິກວິຊາການ, ອຸປະກອນ, ພາຫະນະ, ວັດຖຸປັດໄຈ, ເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນການພັດທະນາວຽກງານສັງຄົມສົງເຄາະ.

## ມາດຕາ 5 ຫຼັກການກ່ຽວກັບວຽກງານສັງຄົມສົງເຄາະ

ວຽກງານສັງຄົມສົງເຄາະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນ ຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ, ສາມາດກວດສອບໄດ້ ແລະ ຖືກຕ້ອງຕາມຫຼັກວິຊາຊີບສັງຄົມສົງເຄາະ;
4. ຮັບປະກັນ ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງເປົ້າໝາຍສັງຄົມສົງເຄາະ;
5. ຮັບປະກັນ ການປະສານສົມທົບລະຫວ່າງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ, ການມີສ່ວນຮ່ວມຂອງປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ.

## ມາດຕາ 6 ພັນທະຂອງພົນລະເມືອງຕໍ່ວຽກງານສັງຄົມສົງເຄາະ

ພົນລະເມືອງທຸກຄົນ ມີພັນທະປະກອບສ່ວນ ເຂົ້າໃນວຽກງານສັງຄົມສົງເຄາະ ດ້ວຍການໃຫ້ການຮ່ວມມື, ເຂົ້າຮ່ວມໃຫ້ການຊ່ວຍເຫຼືອ, ການບໍລິການ ທາງດ້ານວັດຖຸ, ຈິດໃຈ ແລະ ການພັດທະນາ ເປົ້າໝາຍສັງຄົມ

ສິງເຄາະ ລວມທັງການສ້າງສັງຄົມທີ່ເທົ່າທຽມກັນ, ມີຄວາມສະເໝີພາບ, ມີນໍ້າໃຈ ແລະ ຄວາມເມດຕາ ຕໍ່ເປົ້າໝາຍສັງຄົມສົງເຄາະ.

**ມາດຕາ 7 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວ ກ່ຽວກັບວຽກງານສັງຄົມສົງເຄາະ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັງຄົມສົງເຄາະ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການສຶກສາ, ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບ ຄວາມຮູ້ ຄວາມສາມາດທາງດ້ານວິຊາການ ເພື່ອໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ, ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດ ແລະ ຮູບແບບ ສັງຄົມສົງເຄາະ
### ໝວດທີ 1
### ປະເພດສັງຄົມສົງເຄາະ

**ມາດຕາ 9 ປະເພດສັງຄົມສົງເຄາະ**

ປະເພດສັງຄົມສົງເຄາະ ມີ ດັ່ງນີ້:

1. ດ້ານການອຸປະໂພກ, ການບໍລິໂພກ;
2. ດ້ານການຈັດຫາ ແລະ ການປຸກສ້າງ ທີ່ຢູ່ອາໄສ;
3. ດ້ານການແພດ;
4. ດ້ານກົດໝາຍ;
5. ດ້ານການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ;
6. ດ້ານການເບິ່ງແຍງ ລ້ຽງດູ;
7. ດ້ານການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ;
8. ດ້ານການປັບປຸງຊີວິດການເປັນຢູ່;
9. ດ້ານການຊາປະນະກິດສົບ;
10. ສັງຄົມສົງເຄາະດ້ານອື່ນ ທີ່ມີຄວາມຈໍາເປັນ.

ສໍາລັບລະດັບສັງຄົມສົງເຄາະ ຕໍ່ແຕ່ລະເປົ້າໝາຍສັງຄົມສົງເຄາະ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ສັງຄົມສົງເຄາະດ້ານການອຸປະໂພກ, ການບໍລິໂພກ**

ສັງຄົມສົງເຄາະດ້ານການອຸປະໂພກ, ການບໍລິໂພກ ແມ່ນ ການຊ່ວຍເຫຼືອ ເຄື່ອງນຸ່ງຫົ່ມ, ວັກຊີນກັນພະຍາດ, ຢາ ແລະ ຜະລິດຕະພັນການແພດ, ອາຫານ, ນໍ້າດື່ມ, ນໍ້າໃຊ້ ແລະ ເຄື່ອງໃຊ້ໃນຄົວເຮືອນ ເພື່ອບັນເທົາທຸກ ແລະ ຟື້ນຟູຊີວິດການເປັນຢູ່ຂັ້ນພື້ນຖານ ໃຫ້ແກ່ເປົ້າໝາຍສັງຄົມສົງເຄາະ.

**ມາດຕາ 11 ສັງຄົມສົງເຄາະດ້ານການຈັດຫາ ແລະ ການປຸກສ້າງ ທີ່ຢູ່ອາໄສ**

ສັງຄົມສົງເຄາະດ້ານການຈັດຫາ ແລະ ການປຸກສ້າງ ທີ່ຢູ່ອາໄສ ແມ່ນ ການຊ່ວຍເຫຼືອ ດ້ວຍການຈັດຫາສູນ ຫຼື ສະຖານທີ່ ທີ່ສາມາດອາໄສ ຫຼື ພັກເຊົາ ຊົ່ວຄາວ ທີ່ມີຄວາມປອດໄພ ແລະ ສົມທົບທຶນ ຫຼື ອຸປະກອນປຸກສ້າງ ທີ່ຢູ່ອາໄສ ໃຫ້ແກ່ເປົ້າໝາຍສັງຄົມສົງເຄາະ ທີ່ມີຄວາມຈຳເປັນ.

**ມາດຕາ 12 ສັງຄົມສົງເຄາະດ້ານການແພດ**

ສັງຄົມສົງເຄາະດ້ານການແພດ ແມ່ນ ການຊ່ວຍເຫຼືອ ແລະ ການບໍລິການ ດ້ວຍການໃຫ້ ຄຳປຶກສາ, ແນະນຳ, ສະໜອງຂໍ້ມູນ ກ່ຽວກັບ ການອະນາໄມ ແລະ ສົ່ງເສີມສຸຂະພາບ, ການກັນ ແລະ ຄວບຄຸມພະຍາດ, ການປິ່ນປົວ ແລະ ຟື້ນຟູໜ້າທີ່ການ ແລະ ອື່ນໆ ໃຫ້ແກ່ເປົ້າໝາຍສັງຄົມສົງເຄາະ.

**ມາດຕາ 13 ສັງຄົມສົງເຄາະດ້ານກົດໝາຍ**

ສັງຄົມສົງເຄາະດ້ານກົດໝາຍ ແມ່ນ ການຊ່ວຍເຫຼືອ ແລະ ການບໍລິການ ດ້ວຍການໃຫ້ ຄຳປຶກສາ, ຄຳແນະນຳດ້ານກົດໝາຍ, ມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເປັນຕົວແທນໃນການຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດ ຂອງເປົ້າໝາຍສັງຄົມສົງເຄາະ ໂດຍບໍ່ເສຍຄ່າ ຕາມກົດໝາຍວ່າດ້ວຍທະນາຍຄວາມກຳນົດໄວ້.

**ມາດຕາ 14 ສັງຄົມສົງເຄາະດ້ານການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ**

ສັງຄົມສົງເຄາະດ້ານການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ ແມ່ນການຊ່ວຍເຫຼືອ ແລະ ການບໍລິການ ດ້ວຍການໃຫ້ຄຳປຶກສາ, ຄຳແນະນຳ ແກ່ເປົ້າໝາຍສັງຄົມສົງເຄາະ ໃຫ້ໄດ້ຮັບນະໂຍບາຍ ດ້ານການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ ໃຫ້ສາມາດປະກອບອາຊີບອິດສະລະ ຫຼື ມີວຽກເຮັດງານທຳ.

**ມາດຕາ 15 ສັງຄົມສົງເຄາະດ້ານການເບິ່ງແຍງ ລ້ຽງດູ**

ສັງຄົມສົງເຄາະດ້ານການເບິ່ງແຍງ ລ້ຽງດູ ແມ່ນ ການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຊ່ວຍເຫຼືອເບິ່ງແຍງ ລ້ຽງດູ ດ້ວຍການໃຫ້ ຄວາມອົບອຸ່ນ, ຄວາມໃກ້ຊິດ, ຮັກແພງ, ຄຳປຶກສາ ແລະການຊ່ວຍເຫຼືອອື່ນ ໃຫ້ແກ່ເປົ້າໝາຍສັງຄົມສົງເຄາະ ເປັນຕົ້ນ ເດັກທີ່ຕ້ອງປົກປ້ອງພິເສດ, ຄົນພິການ, ຜູ້ອາຍຸສູງ ຕາມລະບຽບການ.

**ມາດຕາ 16 ສັງຄົມສົງເຄາະດ້ານການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ**

ສັງຄົມສົງເຄາະດ້ານການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ແມ່ນ ການປະສານສົມທົບ ລະຫວ່າງພາກສ່ວນຮັບຜິດຊອບວຽກງານສັງຄົມສົງເຄາະ, ຂະແໜງການທີ່ກ່ຽວຂ້ອງ ກັບ ອົງການປົກຄອງທ້ອງຖິ່ນບ່ອນເປົ້າໝາຍສັງຄົມສົງເຄາະອາໄສຢູ່ ເພື່ອຊອກຫາ ຄອບຄົວ, ຜູ້ປົກຄອງ, ຍາດພີ່ນ້ອງ, ສຶກສາເບິ່ງເງື່ອນໄຂ, ຄວາມພ້ອມ ທັງຄວາມເໝາະສົມຂອງຜູ້ກ່ຽວ ໃນການສົ່ງເປົ້າໝາຍດັ່ງກ່າວ ໃຫ້ຄອບຄົວ, ຜູ້ປົກຄອງ, ຍາດພີ່ນ້ອງ, ຊຸມຊົນ, ສັງຄົມ, ຫ້ອງການບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຜູ້ກ່ຽວ ຕາມລະບຽບການ.

ໃນກໍລະນີ ເປົ້າໝາຍບໍ່ສາມາດກັບຄືນສູ່ຄອບຄົວໄດ້ຍ້ອນສາເຫດຈໍາເປັນນັ້ນ ພາກສ່ວນຮັບຜິດຊອບວຽກງານສັງຄົມສົງເຄາະ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສືບຕໍ່ຫາວິທີໃຫ້ການຊ່ວຍເຫຼືອ ແລະ ເບິ່ງແຍງ ລ້ຽງດູ ຜູ້ກ່ຽວ ຢ່າງເໝາະສົມ.

**ມາດຕາ 17 ສັງຄົມສົງເຄາະດ້ານການປັບປຸງຊີວິດການເປັນຢູ່**

ສັງຄົມສົງເຄາະດ້ານການປັບປຸງຊີວິດການເປັນຢູ່ ແມ່ນ ການປະສານສົມທົບ ລະຫວ່າງ ພາກສ່ວນຮັບຜິດຊອບວຽກງານສັງຄົມສົງເຄາະ, ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ກັບ ອົງການປົກຄອງທ້ອງຖິ່ນ ໃນການປະເມີນເປົ້າໝາຍສັງຄົມສົງເຄາະ ທີ່ທຸກຍາກ ຫຼື ບໍ່ມີເງື່ອນໄຂທາງດ້ານເສດຖະກິດ ໃຫ້ໄດ້ຮັບການຊ່ວຍເຫຼືອ ແລະ ການພັດທະນາ ເປັນຕົ້ນ ທຶນ, ປັດໄຈການຜະລິດ ໃຫ້ສາມາດເຄື່ອນໄຫວຫາລ້ຽງຊີບ, ປະກອບອາຊີບໃດໜຶ່ງ ເພື່ອຊ່ວຍເຫຼືອຕົນເອງ.

**ມາດຕາ 18 ສັງຄົມສົງເຄາະດ້ານການຊາປະນະກິດສົບ**

ສັງຄົມສົງເຄາະດ້ານການຊາປະນະກິດສົບ ແມ່ນ ການຊ່ວຍເຫຼືອ ຊາປະນະກິດສົບ ເປົ້າໝາຍສັງຄົມສົງເຄາະ ທີ່ເສຍຊີວິດ ຊຶ່ງບໍ່ໄດ້ຮັບການຄຸ້ມຄອງ ໃນລະບົບປະກັນສັງຄົມ ຫຼື ປະກັນໄພ, ຜູ້ອະນາຖາ, ຜູ້ບໍ່ມີຄອບຄົວ ແລະ ຍາດພີ່ນ້ອງ ເບິ່ງແຍງ ລ້ຽງດູ.

## ໝວດທີ 2
## ຮູບແບບສັງຄົມສົງເຄາະ

**ມາດຕາ 19 ຮູບແບບສັງຄົມສົງເຄາະ**

ສັງຄົມສົງເຄາະ ມີ ສອງຮູບແບບ ດັ່ງນີ້:

1. ສັງຄົມສົງເຄາະແບບ ຮີບດ່ວນ ຫຼື ສຸກເສີນ;
2. ສັງຄົມສົງເຄາະແບບປົກກະຕິ.

**ມາດຕາ 20 ສັງຄົມສົງເຄາະແບບ ຮີບດ່ວນ ຫຼື ສຸກເສີນ**

ສັງຄົມສົງເຄາະແບບ ຮີບດ່ວນ ຫຼື ສຸກເສີນ ແມ່ນ ການຊ່ວຍເຫຼືອ ແລະ ການບໍລິການ ທາງກົງ ຫຼື ທາງອ້ອມ ຕໍ່ແຕ່ລະປະເພດສັງຄົມສົງເຄາະ ໂດຍທັນທີແກ່ເປົ້າໝາຍສັງຄົມສົງເຄາະ ເມື່ອພົບເຫັນ ຫຼື ໄດ້ຮັບການລາຍງານ ກໍລະນີ ຮີບດ່ວນ ຫຼື ສຸກເສີນ.

**ມາດຕາ 21 ສັງຄົມສົງເຄາະແບບປົກກະຕິ**

ສັງຄົມສົງເຄາະແບບປົກກະຕິ ແມ່ນ ການຊ່ວຍເຫຼືອ, ການບໍລິການ ແລະ ການພັດທະນາ ທາງກົງ ຫຼື ທາງອ້ອມ ຕໍ່ແຕ່ລະປະເພດສັງຄົມສົງເຄາະ ຕາມການສະເໜີຂອງ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

# ພາກທີ III
# ເປົ້າໝາຍສັງຄົມສົງເຄາະ ແລະ ການຄຸ້ມຄອງການຊ່ວຍເຫຼືອ
## ໝວດທີ 1
## ເປົ້າໝາຍສັງຄົມສົງເຄາະ

### ມາດຕາ 22 ເປົ້າໝາຍສັງຄົມສົງເຄາະ

ເປົ້າໝາຍສັງຄົມສົງເຄາະ ປະກອບດ້ວຍ:

1. ເດັກທີ່ຕ້ອງປົກປ້ອງພິເສດ;
2. ຄົນພິການ ຫຼື ຄົນບ້າເສຍຈິດ ທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກ;
3. ຜູ້ອາຍຸສູງ ແຕ່ ຫົກສິບປີ ຂຶ້ນໄປ ທີ່ ອາໄສຢູ່ນຳຄອບຄົວທີ່ທຸກຍາກ ຫຼື ປ່ຽວພອຍທຸກຍາກ;
4. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງທຸກຮູບແບບ;
5. ບຸກຄົນ ຫຼື ຄອບຄົວ ທີ່ປະສົບເຄາະຮ້າຍ ທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້;
6. ຜູ້ອອກຢາເສບຕິດ ທີ່ທຸກຍາກ ຫຼື ອາໄສ ຢູ່ນຳຄອບຄົວທີ່ທຸກຍາກ ຫຼື ບໍ່ມີຜູ້ເບິ່ງແຍງ ລ້ຽງດູ;
7. ຜູ້ທຸກຍາກ ຂາດທີ່ຢູ່ອາໄສ;
8. ເປົ້າໝາຍອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 23 ສິດຂອງເປົ້າໝາຍສັງຄົມສົງເຄາະ

ເປົ້າໝາຍສັງຄົມສົງເຄາະ ມີສິດ ດັ່ງນີ້:

1. ເຂົ້າເຖິງການບໍລິການຂັ້ນພື້ນຖານ ເປັນຕົ້ນ ດ້ານ ການແພດ, ກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການພັດທະນາສີມືແຮງງານ, ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສັງຄົມສົງເຄາະ;
2. ໄດ້ຮັບຄຳແນະນຳ ກ່ຽວກັບວຽກງານສັງຄົມສົງເຄາະ;
3. ໄດ້ຮັບ ວັດຖຸທີ່ໃຊ້ໃນສັງຄົມສົງເຄາະ ແລະ ຄ່າໃຊ້ຈ່າຍພື້ນຖານທີ່ຈຳເປັນ;
4. ໄດ້ຮັບການຊ່ວຍເຫຼືອທາງດ້ານຈິດໃຈຈາກສັງຄົມ;
5. ລາຍງານ, ສົ່ງຂ່າວ, ສະເໜີ ແລະ ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ, ເປັນທຳ ແລະ ສະເໜີພາບ ກ່ຽວກັບວຽກງານສັງຄົມສົງເຄາະ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 24 ພັນທະຂອງເປົ້າໝາຍສັງຄົມສົງເຄາະ

ເປົ້າໝາຍສັງຄົມສົງເຄາະ ມີພັນທະ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບຕົນເອງ ແລະ ຄອບຄົວ ໃຫ້ຖືກຕ້ອງຕາມຄວາມເປັນຈິງ. ສຳລັບບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ເປັນຕົ້ນ ເດັກທີ່ຕ້ອງປົກປ້ອງພິເສດ, ຄົນບ້າເສຍຈິດ ນັ້ນ ຕ້ອງໃຫ້ ພໍ່ ແມ່ ຫຼື ຜູ້ປົກຄອງ ເປັນຜູ້ສະໜອງຂໍ້ມູນ;
2. ຊ່ວຍເຫຼືອ, ພັດທະນາ ຕົນເອງ ແລະ ຄອບຄົວ ໃຫ້ມີຊີວິດການເປັນຢູ່ດີຂຶ້ນ ລວມທັງການນຳໃຊ້ສິ່ງທີ່ໄດ້ຮັບຈາກການຊ່ວຍເຫຼືອ ຢ່າງຖືກຕ້ອງ;
3. ໃຫ້ການຮ່ວມມື, ເຂົ້າຮ່ວມ ແລະ ປະກອບສ່ວນ ເຂົ້າໃນການເຄື່ອນໄຫວວຽກງານສັງຄົມສົງເຄາະ;

4. ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັງຄົມສົງເຄາະ ຢ່າງເຂັ້ມງວດ;
5. ມີພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການຄຸ້ມຄອງການຊ່ວຍເຫຼືອ

### ມາດຕາ 25 ການຄຸ້ມຄອງການຊ່ວຍເຫຼືອ

ລັດຖະບານ ຄຸ້ມຄອງການຊ່ວຍເຫຼືອ ທັງພາຍໃນ ແລະ ຕ່າງປະເທດ ຢ່າງລວມສູນ ໂດຍມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮັບຜິດຊອບໂດຍກົງ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 26 ການຮັບການຊ່ວຍເຫຼືອ

ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ເປັນໃຈກາງໃນການຮັບການຊ່ວຍເຫຼືອ ທັງພາຍໃນ ແລະ ຕ່າງປະເທດ ໂດຍຜ່ານການກວດກາຢ່າງຖືກຕ້ອງຈາກຂະແໜງການທີ່ກ່ຽວຂ້ອງ ເພື່ອນຳໄປຈັດສັນ ແລະ ໃຫ້ການຊ່ວຍເຫຼືອ ແກ່ເປົ້າໝາຍສັງຄົມສົງເຄາະ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ສາມາດຈັດຕັ້ງການຮັບການຊ່ວຍເຫຼືອ ທັງພາຍໃນ ແລະ ຕ່າງປະເທດໄດ້ ແຕ່ຕ້ອງລາຍງານ ຕໍ່ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີ ການຄວບຄຸມພາຍໃນ, ລະບົບກວດກາ, ກວດສອບ ການບັນຊີ, ມີວິທີການ ແລະ ກົນໄກທີ່ໂປ່ງໃສ.

ສຳລັບການປະຕິບັດ ກ່ຽວກັບການຮັບການຊ່ວຍເຫຼືອຈາກຕ່າງປະເທດນັ້ນ ໃຫ້ດຳເນີນຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການຊ່ວຍເຫຼືອດັ່ງກ່າວ.

### ມາດຕາ 27 ການເກັບຮັກສາເຄື່ອງຊ່ວຍເຫຼືອ

ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອ ຕ້ອງປະຕິບັດມາດຕະການທີ່ຈຳເປັນ ເພື່ອບໍລິຫານຈັດການ ແລະ ເກັບຮັກສາສະບຽງອາຫານ, ວັດຖຸປະກອນ ແລະ ສິ່ງຂອງຕ່າງໆ ໄວ້ໃນສາງ, ສະຖານທີ່ປອດໄພ, ສະພາບແວດລ້ອມທີ່ເໝາະສົມ, ຮັບປະກັນຄຸນນະພາບ, ສາມາດບໍລິໂພກ ແລະ ນຳໃຊ້ໄດ້ ທີ່ບໍ່ກະທົບຕໍ່ສຸຂະພາບ ຂອງເປົ້າໝາຍສັງຄົມສົງເຄາະ.

### ມາດຕາ 28 ການຂໍການຊ່ວຍເຫຼືອ ຂອງເປົ້າໝາຍສັງຄົມສົງເຄາະ

ເປົ້າໝາຍສັງຄົມສົງເຄາະ ຫຼື ຕົວແທນທີ່ໄດ້ຮັບການມອບໝາຍ ຈາກເປົ້າໝາຍດັ່ງກ່າວ ຕ້ອງປະກອບເອກະສານ ຂໍການຊ່ວຍເຫຼືອແຕ່ລະປະເພດ ໂດຍຜ່ານການຢັ້ງຢືນຈາກຫ້ອງການບ້ານ ຕາມລະບຽບການ ເພື່ອສະເໜີຕໍ່ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພິຈາລະນາ.

ໃນກໍລະນີເປົ້າໝາຍສັງຄົມສົງເຄາະ ຫາກບໍ່ສາມາດປະກອບເອກະສານ ຂໍການຊ່ວຍເຫຼືອດ້ວຍຕົນເອງໄດ້ ໃຫ້ຫ້ອງການບ້ານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ຊ່ວຍປະກອບເອກະສານ ແລະ ຢັ້ງຢືນການຂໍຄວາມຊ່ວຍເຫຼືອ ຕາມລະບຽບການ.

ສໍາລັບກໍລະນີ ຮີບດ່ວນ ຫຼື ສຸກເສີນນັ້ນ ບໍ່ຈໍາເປັນຕ້ອງປະກອບເອກະສານຂໍການຊ່ວຍເຫຼືອ.

**ມາດຕາ 29 ການໃຫ້ການຊ່ວຍເຫຼືອແກ່ເປົ້າໝາຍສັງຄົມສົງເຄາະ**

ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງນໍາເອົາເຄື່ອງຂອງທີ່ໄດ້ຮັບການຊ່ວຍເຫຼືອ ໄປມອບໃຫ້ເປົ້າໝາຍສັງຄົມສົງເຄາະ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີຈໍາເປັນຮີບດ່ວນ ຜູ້ພົບເຫັນເປົ້າໝາຍສັງຄົມສົງເຄາະ ຕ້ອງໃຫ້ການຊ່ວຍເຫຼືອເບື້ອງຕົ້ນ ຫຼື ແຈ້ງ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອດໍາເນີນການຊ່ວຍເຫຼືອ ໃຫ້ທັນການ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດໃຫ້ການຊ່ວຍເຫຼືອດ້ວຍຄວາມສະໝັກໃຈ ໂດຍບໍ່ມີເງື່ອນໄຂ ຫຼື ຂໍ້ຜູກມັດໃດໜຶ່ງ ຕໍ່ລັດ ແລະ ເປົ້າໝາຍສັງຄົມສົງເຄາະ ຕາມຮູບແບບສັງຄົມສົງເຄາະ ແຕ່ຕ້ອງລາຍງານການຊ່ວຍເຫຼືອດັ່ງກ່າວ ຕໍ່ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ພາກທີ IV
## ວິຊາຊີບ ແລະ ນັກ ສັງຄົມສົງເຄາະ

**ມາດຕາ 30 ວິຊາຊີບສັງຄົມສົງເຄາະ**

ວິຊາຊີບສັງຄົມສົງເຄາະ ແມ່ນ ວິຊາການໜຶ່ງ ກ່ຽວກັບການຊ່ວຍເຫຼືອ, ການບໍລິການ ແລະ ການພັດທະນາ ເປົ້າໝາຍສັງຄົມສົງເຄາະ ເພື່ອໃຫ້ສາມາດຊ່ວຍເຫຼືອຕົນເອງ ແລະ ປັບປຸງຄຸນນະພາບການດໍາລົງຊີວິດດີຂຶ້ນ.

**ມາດຕາ 31 ນັກສັງຄົມສົງເຄາະ**

ນັກສັງຄົມສົງເຄາະ ແມ່ນ ບຸກຄົນທີ່ເຮັດໜ້າທີ່ຊ່ວຍເຫຼືອສັງຄົມ ຊຶ່ງໄດ້ຮັບອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການເຄື່ອນໄຫວວິຊາຊີບສັງຄົມສົງເຄາະ ຕາມກົດໝາຍ.

**ມາດຕາ 32 ປະເພດນັກສັງຄົມສົງເຄາະ**

ນັກສັງຄົມສົງເຄາະ ມີ ສອງປະເພດ ດັ່ງນີ້:

1. ນັກສັງຄົມສົງເຄາະອາຊີບ ຊຶ່ງແມ່ນ ຜູ້ທີ່ມີວຸດທິການສຶກສາ ດ້ານສັງຄົມສົງເຄາະ ຫຼື ສາຂາອື່ນທີ່ກ່ຽວຂ້ອງ ຢ່າງເປັນລະບົບ;
2. ນັກສັງຄົມສົງເຄາະເຄິ່ງອາຊີບ ຊຶ່ງແມ່ນ ຜູ້ທີ່ມີວຸດທິການສຶກສາທົ່ວໄປ ຫຼື ມີວິຊາສະເພາະໃດໜຶ່ງ ແລະ ຜ່ານການຝຶກອົບຮົມດ້ານສັງຄົມສົງເຄາະ ຢ່າງເປັນລະບົບ.

ນອກຈາກນີ້ ຍັງມີ ອາສາສະໝັກ, ບຸກຄະລາກອນ ຈາກມູນນິທິ, ສະມາຄົມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເຮັດໜ້າທີ່ໃຫ້ການຊ່ວຍເຫຼືອເປົ້າໝາຍສັງຄົມສົງເຄາະ.

**ມາດຕາ 33 ມາດຕະຖານ ແລະ ເງື່ອນໄຂຂອງນັກສັງຄົມສົງເຄາະ**

ມາດຕະຖານ ແລະ ເງື່ອນໄຂລວມຂອງນັກສັງຄົມສົງເຄາະ ມີ ດັ່ງນີ້:

1. ເປັນຄົນສັນຊາດລາວ;
2. ມີ ຄຸນສົມບັດ, ຈັນຍາບັນ, ຈັນຍາທຳ, ຄວາມບໍລິສຸດສັດຊື່ ຕໍ່ ອາຊີບ, ປະຊາຊົນ ແລະ ປະເທດຊາດ;
3. ບໍ່ເຄີຍຖືກລົງວິໄນ ຫຼື ຖືກສານຕັດສິນລົງໂທດທາງອາຍາ ຍ້ອນການກະທຳຜິດ ໂດຍເຈດຕະນາ;
4. ມີສຸຂະພາບດີ.

ນອກຈາກມາດຕະຖານ ແລະ ເງື່ອນໄຂລວມແລ້ວ ນັກສັງຄົມສັງເຄາະອາຊີບ ຍັງມີມາດຕະຖານ ແລະ ເງື່ອນໄຂສະເພາະ ດັ່ງນີ້:

1. ມີອາຍຸແຕ່ ຊາວສາມປີ ຂຶ້ນໄປ;
2. ມີລະດັບການສຶກສາດ້ານສັງຄົມສົງເຄາະ ຫຼື ການສຶກສາສາຂາອື່ນທີ່ກ່ຽວຂ້ອງ ໃນຊັ້ນປະລິນຍາຕີ ຂຶ້ນໄປ ແລະ ມີປະສົບການດ້ານວຽກງານສັງຄົມສົງເຄາະ ຢ່າງໜ້ອຍ ສອງປີ;

ສຳລັບນັກສັງຄົມສັງເຄາະເຄິ່ງອາຊີບ ນອກຈາກມາດຕະຖານ ແລະ ເງື່ອນໄຂ ລວມແລ້ວ ຍັງມີມາດຕະຖານ ແລະ ເງື່ອນໄຂສະເພາະ ດັ່ງນີ້:

1. ມີອາຍຸແຕ່ ສິບແປດປີ ຂຶ້ນໄປ;
2. ມີລະດັບການສຶກສາທົ່ວໄປ ຫຼື ມີວິຊາສະເພາະໃດໜຶ່ງ ແລະ ຜ່ານການຝຶກອົບຮົມດ້ານສັງຄົມສົງເຄາະ ຢ່າງເປັນລະບົບ.

**ມາດຕາ 34 ມາດຕະຖານ ແລະ ເງື່ອນໄຂຂອງນັກສັງຄົມສົງເຄາະ ສຳລັບ ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ**

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງສະໝັກເປັນນັກສັງຄົມສົງເຄາະ ຢູ່ ສປປ ລາວ ນອກຈາກມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຍົກເວັ້ນ ຂໍ້ 1 ຂອງວັກທີໜຶ່ງ ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ໄດ້ຮັບອະນຸຍາດ ໃຫ້ເຂົ້າມາເຄື່ອນໄຫວ ແລະ ເຮັດວຽກຢ່າງຖືກຕ້ອງຕາມກົດໝາຍ ຫຼື ມີບ່ອນຢູ່ຖາວອນ ຢູ່ ສປປ ລາວ;
2. ຮູ້ພາສາ ແລະ ວັດທະນະທຳລາວດີ ພ້ອມທັງມີຄວາມຮູ້ພື້ນຖານທາງດ້ານກົດໝາຍ ຂອງ ສ ປປ ລາວ.

**ມາດຕາ 35 ການອະນຸຍາດເປັນນັກສັງຄົມສົງເຄາະ**

ບຸກຄົນທີ່ຈະເປັນນັກສັງຄົມສົງເຄາະ ຕ້ອງໄດ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານຢັ້ງຢືນມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 33 ແລະ ມາດຕາ 34 ຂອງກົດໝາຍສະບັບນີ້ ຕໍ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາ ອອກໃບອະນຸຍາດເປັນນັກສັງຄົມສົງເຄາະ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ພ້ອມດ້ວຍເອກະສານຢັ້ງຢືນມາດຕະຖານ ແລະ ເງື່ອນໄຂຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີ ບໍ່ອອກໃບອະນຸຍາດເປັນນັກສັງຄົມສົງເຄາະ ກໍຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ພາຍໃນເວລາ ສິບວັນ ລັດຖະການ.

**ມາດຕາ 36 ສິດ ແລະ ໜ້າທີ່ຂອງນັກສັງຄົມສົງເຄາະ**

ນັກສັງຄົມສົງເຄາະ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມ ການຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບວຽກງານສັງຄົມສົງເຄາະ;

2. ໃຫ້ການຊ່ວຍເຫຼືອ, ການບໍລິການ ແລະ ການພັດທະນາ ເປົ້າໝາຍສັງຄົມສົງເຄາະ ເປັນຕົ້ນ ໃຫ້ຄໍາປຶກສາ, ຄໍາແນະນໍາ, ຄວາມຮູ້ ລວມທັງການຊ່ວຍເຫຼືອ ເພື່ອບັນເທົາຄວາມເດືອດຮ້ອນ ຈາກບັນຫາສັງຄົມ, ໄພພິບັດ ຫຼື ການປ່ຽນແປງສະພາບດິນຟ້າອາກາດ ແກ່ເປົ້າໝາຍສັງຄົມສົງເຄາະ;

3. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສັງຄົມສົງເຄາະ;

4. ພົບປະ ແລະ ເກັບກໍາຂໍ້ມູນ ຈາກເປົ້າໝາຍສັງຄົມສົງເຄາະ;

5. ພັດທະນາຕົນເອງໃຫ້ມີ ຄວາມຮູ້, ຄວາມສາມາດ ແລະ ທັກສະທາງສັງຄົມ ພ້ອມທັງປະກອບສ່ວນເຂົ້າໃນການພັດທະນາວິຊາຊີບສັງຄົມສົງເຄາະ ໃຫ້ມີຄວາມກ້າວໜ້າ;

6. ລາຍງານ ກ່ຽວກັບ ການຊ່ວຍເຫຼືອ, ການບໍລິການ ແລະ ການພັດທະນາ ເປົ້າໝາຍສັງຄົມສົງເຄາະ ຕໍ່ການຈັດຕັ້ງທີ່ຕົນຂຶ້ນກັບ ຕາມແຕ່ລະກໍລະນີ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 37 ຈັນຍາບັນຂອງນັກສັງຄົມສົງເຄາະ**

ຈັນຍາບັນຂອງນັກສັງຄົມສົງເຄາະ ແມ່ນ ກິດການປະພຶດທີ່ດີ ແລະ ຄວາມຮັບຜິດຊອບ ຂອງນັກສັງຄົມສົງເຄາະ ຊຶ່ງສະແດງອອກ ດ້ວຍການກະທໍາ, ວາຈາ, ຈິດສໍານຶກ, ມີ ຄວາມທ່ຽງທໍາ, ມະນຸດສະທໍາ, ກຽດສັກສີ, ບໍລິສຸດ ສັດຊື່, ສຸພາບຮຽບຮ້ອຍ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ໃນການເຄື່ອນໄຫວວິຊາຊີບສັງຄົມສົງເຄາະ.

**ມາດຕາ 38 ການສິ້ນສຸດ ການເປັນນັກສັງຄົມສົງເຄາະ**

ການເປັນນັກສັງຄົມສົງເຄາະ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລາອອກ;
2. ຖືກລຶບຊື່ ຍ້ອນການລະເມີດກົດໝາຍ ແລະ ລະບຽບການ;
3. ເສຍຊີວິດ.

## ພາກທີ V
## ຄວາມຮັບຜິດຊອບ, ການມີສ່ວນຮ່ວມ ແລະ ການປຸກຈິດສໍານຶກ
### ໝວດທີ 1
### ຄວາມຮັບຜິດຊອບຂອງ ລັດ, ຊຸມຊົນ ແລະ ຄອບຄົວ

**ມາດຕາ 39 ຄວາມຮັບຜິດຊອບຂອງລັດ**

ລັດ ມີຄວາມຮັບຜິດຊອບ ໃນການສະໜອງງົບປະມານ, ປະກອບ ພາຫະນະ, ວັດຖຸປະກອນ, ເຕັກນິກວິຊາການ, ສ້າງ, ຍົກລະດັບ ແລະ ຝຶກອົບຮົມບຸກຄະລາກອນ, ນັກສັງຄົມສົງເຄາະ ແລະ ກໍ່ສ້າງໂຄງລ່າງພື້ນຖານ ເພື່ອພັດທະນາວຽກງານສັງຄົມສົງເຄາະ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການທີ່ກ່ຽວຂ້ອງ.

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ເປົ້າໝາຍສັງຄົມສົງເຄາະ ໄດ້ຮັບການຊ່ວຍເຫຼືອ, ການບໍລິການ ແລະ ການພັດທະນາຕົນເອງ ໃຫ້ສາມາດປັບປຸງຄຸນນະພາບການດໍາລົງຊີວິດ, ກັບຄືນສູ່ສະພາບປົກກະຕິ ແລະ ດີຂຶ້ນກວ່າເກົ່າ.

**ມາດຕາ 40 ຄວາມຮັບຜິດຊອບຂອງຊຸມຊົນ**

ຊຸມຊົນ ມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ແນະນໍາ, ໃຫ້ການຊ່ວຍເຫຼືອ ແລະ ສະໜອງປັດໄຈພື້ນຖານ ໃນການດໍາລົງຊີວິດ ແກ່ເປົ້າໝາຍສັງຄົມສົງເຄາະ ແລະ ອໍານວຍຄວາມສະດວກ, ໃຫ້ຄວາມຮ່ວມມືກັບ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ນັກສັງຄົມສົງເຄາະ, ຂະແໜງການອື່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ.

**ມາດຕາ 41 ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວມີຄວາມຮັບຜິດຊອບ ໃນການເບິ່ງແຍງ ລ້ຽງດູ, ໃຫ້ກໍາລັງໃຈ, ຊ່ວຍເຫຼືອເປົ້າໝາຍສັງຄົມສົງເຄາະ ແລະ ອໍານວຍຄວາມສະດວກ, ໃຫ້ຄວາມຮ່ວມມື ໃນການສະໜອງຂໍ້ມູນ ໃຫ້ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ນັກສັງຄົມສົງເຄາະ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມຄວາມເປັນຈິງ.

## ໝວດທີ 2
## ການມີສ່ວນຮ່ວມ ແລະ ການປຸກຈິດສໍານຶກ

**ມາດຕາ 42 ການມີສ່ວນຮ່ວມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສ່ວນຮ່ວມ ໃນວຽກງານສັງຄົມສົງເຄາະ ດ້ວຍການ ສະໜອງຂໍ້ມູນ, ການໃຫ້ການ ຊ່ວຍເຫຼືອ, ບໍລິການ ແລະ ພັດທະນາ ເປົ້າໝາຍສັງຄົມສົງເຄາະ ໃຫ້ມີປັດໄຈພື້ນຖານທີ່ສາມາດປັບປຸງຄຸນນະພາບການດໍາລົງຊີວິດ, ກັບຄືນສູ່ສະພາບປົກກະຕິ ແລະ ດີຂຶ້ນກວ່າເກົ່າ.

**ມາດຕາ 43 ການປຸກຈິດສໍານຶກ**

ການປຸກຈິດສໍານຶກ ແມ່ນ ການໃຫ້ຄວາມຮູ້ ແລະ ການສ້າງຄວາມເຂົ້າໃຈ ກ່ຽວກັບວຽກງານສັງຄົມສົງເຄາະ ດ້ວຍການໂຄສະນາ ເຜີຍແຜ່, ສຶກສາອົບຮົມ ຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ຮອບດ້ານ ຜ່ານສື່ມວນຊົນ, ການຝຶກອົບຮົມ, ການຊຸກຍູ້ ແລະ ສົ່ງເສີມ ສ້າງກິດຈະກໍາ ກ່ຽວກັບວຽກງານສັງຄົມສົງເຄາະ ເພື່ອໃຫ້ທຸກຄົນໃນສັງຄົມ ຮັບຮູ້, ເຂົ້າໃຈ ແລະ ເປັນເຈົ້າການ ມີສ່ວນຮ່ວມ ແລະ ອໍານວຍຄວາມສະດວກແກ່ການເຄື່ອນໄຫວວຽກງານດັ່ງກ່າວຢ່າງຕັ້ງໜ້າ ລວມທັງການສ້າງເງື່ອນໄຂໃຫ້ເປົ້າໝາຍສັງຄົມສົງເຄາະເປັນເຈົ້າຕົນເອງ, ກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

# ພາກທີ VI
# ຂໍ້ຫ້າມ

### ມາດຕາ 44 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຈຳແນກ, ຂູດຮີດ ເປົ້າໝາຍສັງຄົມສົງເຄາະ ແລະ ສ້າງເງື່ອນໄຂ, ສະແຫວງຫາຜົນປະໂຫຍດຈາກເປົ້າໝາຍດັ່ງກ່າວ;

2. ທໍລະມານ, ໃຊ້ຄວາມຮຸນແຮງທຸກຮູບແບບ, ບໍ່ເຄົາລົບຊີວິດສ່ວນຕົວ, ຄອບຄົວ ແລະ ທີ່ຢູ່ອາໄສຂອງເປົ້າໝາຍສັງຄົມສົງເຄາະ;

3. ສ້າງອຸປະສັກ, ກີດຂວາງ, ເມີນເສີຍ ຕໍ່ການປະຕິບັດວຽກງານສັງຄົມສົງເຄາະ;

4. ໃຫ້ ຫຼື ຮັບ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ ແກ່ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

5. ເປີດເຜີຍຂໍ້ມູນສ່ວນຕົວຂອງເປົ້າໝາຍສັງຄົມສົງເຄາະ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ກ່ຽວ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ;

6. ບໍລິຈາກວັດຖຸ, ສິ່ງຂອງ ທີ່ໝົດອາຍຸນຳໃຊ້ ຫຼື ບໍ່ມີຄຸນນະພາບ ໃຫ້ເປົ້າໝາຍສັງຄົມສົງເຄາະ;

7. ໂຄສະນາ ເຜີຍແຜ່ ຫຼື ສະໜອງ ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ກ່ຽວກັບວຽກງານສັງຄົມສົງເຄາະ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 45 ຂໍ້ຫ້າມສຳລັບເປົ້າໝາຍສັງຄົມສົງເຄາະ

ຫ້າມ ເປົ້າໝາຍສັງຄົມສົງເຄາະ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ;

2. ສົມຮູ້ຮ່ວມຄິດກັບ ນັກສັງຄົມສົງເຄາະ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

3. ນຳໃຊ້ວັດຖຸທີ່ໃຊ້ໃນວຽກງານສັງຄົມສົງເຄາະ ແລະ ຄ່າໃຊ້ຈ່າຍພື້ນຖານທີ່ຈຳເປັນ ໃນທາງທີ່ບໍ່ຖືກຕ້ອງ;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

5. ໂຄສະນາ ໃສ່ຮ້າຍປ້າຍສີ ນັກສັງຄົມສົງເຄາະ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 46 ຂໍ້ຫ້າມສຳລັບນັກສັງຄົມສົງເຄາະ

ຫ້າມ ນັກສັງຄົມສົງເຄາະ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ ຫຼື ສ້າງຄວາມເສຍຫາຍແກ່ເປົ້າໝາຍສັງຄົມສົງເຄາະ;

2. ສົມຮູ້ຮ່ວມຄິດກັບເປົ້າໝາຍສັງຄົມສົງເຄາະ, ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

3. ທໍລະມານ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ມີການກະທຳ ແລະ ໃຊ້ວາຈາທີ່ບໍ່ເໝາະສົມ;

4. ປະລະໜ້າທີ່ ແລະ ຫຼີບຫຼີກການເຄື່ອນໄຫວວຽກງານສັງຄົມສົງເຄາະ;

5. ກົດໜ່ວງ, ຖ່ວງດຶງ ເອກະສານ ລວມທັງການປອມແປງເອກະສານ ແລະ ນໍາໃຊ້ເອກະສານປອມ;

6. ປະຕິບັດໜ້າທີ່ດ້ວຍຄວາມ ປະໝາດ, ເລີນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຂາດຈັນຍາບັນ, ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ກ່ຽວກັບວຽກງານສັງຄົມສົງເຄາະ;

7. ຕົວະຍົວະ, ຫຼອກລວງ ເປົ້າໝາຍສັງຄົມສົງເຄາະ ລວມທັງການກັກຕຸນເຄື່ອງຊ່ວຍເຫຼືອ, ການບໍລິຈາກວັດຖຸ, ສິ່ງຂອງ ທີ່ໝົດອາຍຸນໍາໃຊ້ ຫຼື ບໍ່ມີຄຸນນະພາບ ໃຫ້ເປົ້າໝາຍສັງຄົມສົງເຄາະ;

8. ຂໍເອົາ, ທວງເອົາ, ຮັບເອົາ ຫຼື ໃຫ້ ສິນບົນ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ ກ່ຽວກັບ ວຽກງານສັງຄົມສົງເຄາະ;

9. ສໍ້ໂກງ ຫຼື ຍັກຍອກ ເງິນ, ວັດຖຸ ສິ່ງຂອງ ທີ່ເປັນເຄື່ອງຊ່ວຍເຫຼືອ ຫຼື ບໍລິຈາກ ທີ່ຈະມອບໃຫ້ເປົ້າໝາຍສັງຄົມສົງເຄາະ;

10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 47 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕໍາແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ສະໜອງຂໍ້ມູນ ກ່ຽວກັບວຽກງານສັງຄົມສົງເຄາະ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ກົດໜ່ວງ, ຖ່ວງດຶງ ເອກະສານ ລວມທັງການປອມແປງເອກະສານ ແລະ ນໍາໃຊ້ເອກະສານປອມ;

4. ປະຕິບັດໜ້າທີ່ດ້ວຍຄວາມ ປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຂາດຈັນຍາບັນ;

5. ຂໍເອົາ, ທວງເອົາ, ຮັບເອົາ ຫຼື ໃຫ້ ສິນບົນ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ ກ່ຽວກັບ ວຽກງານສັງຄົມສົງເຄາະ;

6. ຕົວະຍົວະ, ຫຼອກລວງ ເປົ້າໝາຍສັງຄົມສົງເຄາະ, ກັກຕຸນເຄື່ອງຊ່ວຍເຫຼືອ, ບໍລິຈາກວັດຖຸສິ່ງຂອງ ທີ່ໝົດອາຍຸນໍາໃຊ້ ຫຼື ບໍ່ມີຄຸນນະພາບ ໃຫ້ເປົ້າໝາຍສັງຄົມສົງເຄາະ;

7. ສໍ້ໂກງ ຫຼື ຍັກຍອກ ເງິນ, ວັດຖຸ ສິ່ງຂອງ ທີ່ເປັນເຄື່ອງຊ່ວຍເຫຼືອ ຫຼື ບໍລິຈາກ ທີ່ຈະມອບໃຫ້ເປົ້າໝາຍສັງຄົມສົງເຄາະ;

8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII

## ການຄຸ້ມຄອງ ແລະ ການກວດກາ ວຽກງານສັງຄົມສົງເຄາະ

### ໝວດທີ 1

### ການຄຸ້ມຄອງວຽກງານສັງຄົມສົງເຄາະ

**ມາດຕາ 48 ອົງການຄຸ້ມຄອງວຽກງານສັງຄົມສົງເຄາະ**

ລັດຖະບານ ຄຸ້ມຄອງວຽກງານສັງຄົມສົງເຄາະ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສັງຄົມສົງເຄາະ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງ, ແຂວງ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ນະຄອນ;
4. ໜ່ວຍງານວັດທະນະທຳ-ສັງຄົມ ຕາແສງ.

**ມາດຕາ 49 ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສັງຄົມສົງເຄາະ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສັງຄົມສົງເຄາະ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ ໃຫ້ປະຊາຊົນ, ສັງຄົມ ຮັບຮູ້ຢ່າງກວ້າງຂວາງ;
4. ອອກໃບອະນຸຍາດເປັນນັກສັງຄົມສົງເຄາະ ລວມທັງການຄົ້ນຄວ້າ, ສ້າງ ແລະ ພັດທະນາຫຼັກສູດຝຶກອົບຮົມດ້ານສັງຄົມສົງເຄາະ;
5. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສັງຄົມສົງເຄາະ;
6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານສັງຄົມສົງເຄາະ;
7. ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ລວມທັງການຄຸ້ມຄອງສະມາຄົມ, ມູນນິທິ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສັງຄົມສົງເຄາະ;
8. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ຖານ ຂໍ້ມູນ ຂ່າວສານ, ສະຖິຕິ ກ່ຽວກັບວຽກງານສັງຄົມສົງເຄາະ;
9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັງຄົມສົງເຄາະ;
10. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ;
11. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັງຄົມສົງເຄາະ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ, ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສັງຄົມສົງເຄາະ;

4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານສັງຄົມສົງເຄາະ;

5. ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ລວມທັງການຄຸ້ມຄອງສະມາຄົມ, ມູນນິທິ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສັງຄົມສົງເຄາະ;

6. ນຳໃຊ້ ຖານ ຂໍ້ມູນ ຂ່າວສານ, ສະຖິຕິ ກ່ຽວກັບວຽກງານສັງຄົມສົງເຄາະ;

7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັງຄົມສົງເຄາະ;

8. ປະສານສົມທົບກັບພະແນກການ, ອົງການອື່ນຂັ້ນແຂວງ, ຄະນະກຳມະການປົກຄອງ ເມືອງ, ນະຄອນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ;

9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານສັງຄົມສົງເຄາະ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ຕໍ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 ສິດ ແລະ ໜ້າທີ່ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສັງຄົມສົງເຄາະ;

4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານສັງຄົມສົງເຄາະ;

5. ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ລວມທັງການຄຸ້ມຄອງສະມາຄົມ, ມູນນິທິ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສັງຄົມສົງເຄາະ;

6. ນຳໃຊ້ ຖານ ຂໍ້ມູນ ຂ່າວສານ, ສະຖິຕິ ກ່ຽວກັບວຽກງານສັງຄົມສົງເຄາະ;

7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັງຄົມສົງເຄາະ;

8. ປະສານສົມທົບກັບຫ້ອງການ, ອົງການອື່ນຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ, ຫ້ອງການບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ຕໍ່ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 52 ສິດ ແລະ ໜ້າທີ່ຂອງໜ່ວຍງານວັດທະນະທຳ-ສັງຄົມ ຕາແສງ

ໃນການຄຸ້ມຄອງວຽກງານສັງຄົມສົງເຄາະ ໜ່ວຍງານວັດທະນະທຳ-ສັງຄົມ ຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;

3. ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ;

4. ເກັບກຳ ສະຖິຕິ ແລະ ນຳໃຊ້ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສັງຄົມສົງເຄາະ;

5. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັງຄົມສົງເຄາະ;

6. ປະສານສົມທົບກັບໜ່ວຍງານອື່ນ ຂັ້ນຕາແສງ, ຫ້ອງການບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ຕໍ່ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ນະຄອນ ແລະ ຄະນະກຳມະການປົກຄອງຕາແສງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

### ມາດຕາ 53 ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ, ໃຫ້ການຮ່ວມມື ແລະ ມີສ່ວນຮ່ວມກັບ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນຂອງຕົນ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານສັງຄົມສົງເຄາະ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສັງຄົມສົງເຄາະ

### ມາດຕາ 54 ອົງການກວດກາວຽກງານສັງຄົມສົງເຄາະ

ອົງການກວດກາວຽກງານສັງຄົມສົງເຄາະ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນ ກັບອົງການຄຸ້ມຄອງວຽກງານສັງຄົມສົງເຄາະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 55 ເນື້ອໃນການກວດກາ**

ການກວດກາວຽກງານສັງຄົມສົງເຄາະ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັງຄົມສົງເຄາະ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ແລະ ນັກສັງຄົມສົງເຄາະ ກ່ຽວກັບວຽກງານສັງຄົມສົງເຄາະ;
3. ການຄຸ້ມຄອງການໃຫ້ການຊ່ວຍເຫຼືອ, ການບໍລິການ ແລະ ການພັດທະນາ ເປົ້າໝາຍສັງຄົມສົງເຄາະ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 56 ຮູບການການກວດກາ**

ການກວດກາ ມີສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາວຽກງານສັງຄົມສົງເຄາະ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VIII
## ງົບປະມານ ແລະ ວັນ ສັງຄົມສົງເຄາະ

**ມາດຕາ 57 ງົບປະມານສັງຄົມສົງເຄາະ**

ງົບປະມານທີ່ຮັບໃຊ້ເຂົ້າໃນວຽກງານສັງຄົມສົງເຄາະ ໄດ້ມາຈາກ:

1. ງົບປະມານແຫ່ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ຈັດສັນໃຫ້ແຕ່ລະປີ;
2. ການຊ່ວຍເຫຼືອຈາກສັງຄົມ ແລະ ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
3. ການລະດົມທຶນ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 58 ວັນສັງຄົມສົງເຄາະແຫ່ງຊາດ**

ລັດ ກໍານົດເອົາວັນທີ 22 ມັງກອນ ເປັນວັນສັງຄົມສົງເຄາະແຫ່ງຊາດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 61 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 62 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 9 ກັນຍາ 2025 ພາຍຫຼັງ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ